## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 37/ນຍ.

# ຂໍ້ຕົກລົງ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການຄຸ້ມຄອງ ແລະ ການພັດທະນາຂະແໜງນ້ຳປະປາ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 01/ສພຊ, ລົງວັນທີ 8 ມີນາ 1995;
- ອີງຕາມການສະເໜີ ຂອງ ປະທານຄະນະກຳມະການແຜນການແຫ່ງລັດ ສະບັບເລກທີ 438/ຄຜລ.99, ລົງວັນທີ 13 ກັນຍາ 1999;
- ອີງຕາມການສະເໜີ ຂອງລັດຖະມົນຕີກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 3326/ຄຂປກ, ລົງວັນທີ 20 ກັນຍາ 1999.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ :

**ມາດຕາ 1. ຈຸດປະສົງລວມ**

ຂໍ້ຕົກລົງສະບັບນີ້ ມີຈຸດປະສົງກຳນົດນະໂຍບາຍຂອງລັດຖະບານ ແຫ່ງ ສປປ ລາວ ກ່ຽວກັບການຄຸ້ມຄອງ ແລະ ການພັດທະນາຂະແໜງນ້ຳປະປາ ເພື່ອເປັນບ່ອນອີງໃຫ້ແກ່ທຸກກະຊວງ, ກົມກອງ, ອົງການ, ສະຖາບັນ, ອຳນາດການປົກຄອງທ້ອງຖິ່ນ, ບັນດາລັດວິສາຫະກິດນ້ຳປະປາ, ຜູ້ບໍລິໂພກນ້ຳ, ອົງການຈັດຕັ້ງຕ່າງປະເທດ ແລະ ສາກົນ ແລະ ພາກສ່ວນທີ່ມີສ່ວນຮ່ວມ ໃນການຈັດຫາທຶນ, ການຄຸ້ມຄອງ ແລະ ການພັດທະນາລະບົບນ້ຳປະປາ ແລະ ນ້ຳເປື້ອນ ໃນຕົວເມືອງ ແລະ ຊົນນະບົດ ໃນຂອບເຂດທົ່ວປະເທດ ໄດ້ຮັບຮູ້ ແລະ ເຂົ້າໃຈແຈ້ງ ແຜນການພັດທະນາ, ຈຸດໝາຍ ແລະ ຂອບຂ່າຍຂອງການດຳເນີນງານ ແນໃສ່ສຸມທຸກກຳລັງແຮງ ເຂົ້າໃນການພັດທະນາຂະແໜງການດັ່ງກ່າວ ໃຫ້ສຳເລັດຕາມຄາດໝາຍ ຢ່າງມີປະສິດທິພາບ ແລະ ຍືນຍົງ.

ນອກຈາກນີ້, ຍັງແມ່ນນະໂຍບາຍຂອງລັດຖະບານ ກ່ຽວກັບການຄຸ້ມຄອງ, ການດັດສົມ, ການຈັດຫາທຶນ, ການເກັບກູ້ທຶນຄືນ, ການດຳເນີນງານ ແລະ ບົວລະບັດຮັກສາລະບົບນ້ຳປະປາ, ການສ້າງຈິດສຳນຶກ ແລະ ການມີສ່ວນຮ່ວມຂອງຊຸມຊົນ, ການພັດທະນາບຸກຄະລາກອນ, ການພັດທະນາແຫຼ່ງນ້ຳ ແລະ ການເຂົ້າຮ່ວມຂອງພາກສ່ວນເອກະຊົນ.

**ມາດຕາ 2. ການແບ່ງຂັ້ນຄຸ້ມຄອງຂະແໜງນ້ຳປະປາ**

2.1 - ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ(ຄຂປກ) ມີໜ້າທີ່:

+ ອຳນວຍຄວາມສະດວກ, ປະສານງານ ແລະ ຊີ້ນຳທຸກກິດຈະການພັດທະນາລະບົບນ້ຳປະປາ ແລະ ນ້ຳເປື້ອນ ໃນຕົວເມືອງ ແລະ ຊົນນະບົດ ຢູ່ໃນຂອບເຂດທົ່ວປະເທດ.

+ ກະຕຸກຊຸກຍູ້ ຂົນຂວາຍຊອກຫາ ແລະນຳໃຊ້ໝົດທຸກຊັບພະຍາກອນທີ່ມີ ເພື່ອໃຫ້ບັນລຸຕາມ ຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

- ກົມເຄຫາສັງເມືອງ ມີໜ້າທີ່ບໍລິຫານ ແລະຄຸ້ມຄອງລັດຕໍ່ຂະແໜງນ້ຳປະປາ ຊ່ວຍລັດຖະມົນຕີ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ດັ່ງນີ້:
+ ກຳນົດຍຸດທະສາດໃນການພັດທະນານ້ຳປະປາໄລຍະສັ້ນ, ກາງ ແລະຍາວ.
+ ຂື້ນແຜນກໍ່ສ້າງຝຶກອົບຮົມພະນັກງານກ່ຽວກັບການວາງແຜນ ແລະຄຸ້ມຄອງນ້ຳປະປາ.
+ ປະສານສົມທົບກັບອົງການນ້ຳປະປາ ຄົ້ນຄ້ວາຂໍ້ກຳນົດ, ກົດລະບຽບ, ມາດຖານເຕັກນິກ, ກຳນົດໝາຍຕ່າງໆ ແລະ ຕິວບົ່ງຊີ້ມາດຖານການດຳເນີນງານກ່ຽວກັບລະບົບນ້ຳປະປາ.

- ອົງການນ້ຳປະປາ ມີໜ້າທີ່:
+ ຄົ້ນຄ້ວາວິຊາການຂອງຂະແໜງນ້ຳປະປາ ຊ່ວຍລັດຖະມົນຕີ ກະຊວງ ຄຂປກ, ພ້ອມທັງຜັນຂະຫຍາຍແຜນຍຸດທະສາດຂອງກະຊວງ ກ່ຽວກັບການພັດທະນາລະບົບນ້ຳປະປາ ແລະ ນ້ຳເປື້ອນໃຫ້ກາຍເປັນແຜນການ, ແຜນງານ ແລະໂຄງການລະອຽດໃນຕົວເມືອງ ແລະ ຊົນນະບົດ ຢູ່ໃນຂອບເຂດທົ່ວປະເທດ.
+ ຄົ້ນຄ້ວາສ້າງຂໍ້ກຳນົດ, ກົດລະບຽບ, ມາດຕະຖານເຕັກນິກ ແລະກຳນົດໝາຍ ເສດຖະກິດ-ເຕັກນິກຕ່າງໆ ກ່ຽວກັບນ້ຳປະປາ ແລະນ້ຳເປື້ອນ.
+ ຕາງໜ້າໃຫ້ກະຊວງ ຄຂປກ ຊີ້ນຳການຈັດຕັ້ງປະຕິບັດ, ການຄຸ້ມຄອງ ແລະຕິດຕາມ ກວດກາ ການປະຕິບັດນະໂຍບາຍຂະແໜງນ້ຳປະປາ.

2.2 ກະຊວງສາທາລະນະສຸກ ມີໜ້າທີ່ອຳນວຍຄວາມສະດວກ, ປະສານງານ ແລະຊີ້ນຳທຸກໆກິດຈະກຳຈັດຫານ້ຳສະອາດ ໃນຊົນນະບົດ ແລະອະນາໄມສິ່ງແວດລ້ອມໃນຕົວເມືອງ ແລະຊົນນະບົດຢູ່ໃນຂອບເຂດ ທົ່ວປະເທດ.

ສູນອະນາໄມສິ່ງແວດລ້ອມແລະຈັດຫານ້ຳສະອາດມີໜ້າທີ່ຄຸ້ມຄອງບັນຊາທາງດ້ານເຕັກນິກໃນການສົ່ງເສີມການຈັດຫານ້ຳສະອາດໃນຊົນນະບົດແລະອະນາໄມສິ່ງແວດລ້ອມໃນຕົວເມືອງແລະຊົນນະບົດຢູ່ໃນຂອບເຂດທົ່ວປະເທດ.

2.3 ກະຊວງການເງິນ ມີໜ້າທີ່:
+ ສະໜັບສະໜູນ ການຈັດຫາທຶນ ແລະຈັດການທາງດ້ານການເງິນ ສຳລັບທຶນທີ່ນຳໃຊ້ເຂົ້າໃນການພັດທະນາລະບົບນ້ຳປະປາ ແລະນ້ຳເປື້ອນ, ການຈັດຫານ້ຳສະອາດ ແລະການອະນາໄມ ສິ່ງແວດລ້ອມ.
+ ສະໜັບສະໜູນທາງດ້ານການເງິນ ໃນໄລຍະສັ້ນ ເຖິງ ໄລຍະກາງ ໃຫ້ແກ່ ລັດວິສາຫະກິດນ້ຳປະປາທີ່ບໍ່ສາມາດບັນລຸໄດ້ເປົ້າໝາຍທາງດ້ານການຄ້າ.

2.4 ຄະນະກຳມະການປະສານງານຊັບພະຍາກອນນ້ຳ ມີໜ້າທີ່ປະສານງານກ່ຽວກັບວຽກງານວາງແຜນ, ຄຸ້ມຄອງ, ຕິດຕາມ ກວດກາ, ປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ເພື່ອຮັບປະກັນການພັດທະນາ ແລະນຳໃຊ້ນ້ຳ ແລະຊັບພະຍາກອນແຫຼ່ງນ້ຳ ຢ່າງຍືນຍົງ.

2.5 - ອຳນາດການປົກຄອງແຂວງ, ກຳແພງນະຄອນ ແລະເຂດພິເສດ ມີໜ້າທີ່:
+ ປະສານງານ, ອຳນວຍຄວາມສະດວກ, ສະໜັບສະໜູນການລົງທຶນເຂົ້າໃສ່ການພັດທະນາ ລະບົບນ້ຳປະປາ ແລະນ້ຳເປື້ອນ,ການຈັດຫານ້ຳສະອາດ ແລະ ການອະນາໄມສິ່ງແວດລ້ອມພາຍໃນແຂວງຂອງຕົນ ສຳລັບບ່ອນທີ່ມີຄວາມຈຳເປັນ.
+ ສົມທົບກັບພະແນກ ຄຂປກ ປະຈຳແຂວງ ຫາວິທີແກ້ໄຂອັນເໝາະສົມ ຊ່ວຍຄອບຄົວທີ່ມີລາຍໄດ້ຕ່ຳທີ່ບໍ່ມີຄວາມສາມາດຈ່າຍຄ່າລະບົບລະບາຍນ້ຳເປື້ອນໄດ້.
+ ວາງຂໍ້ກຳນົດ, ກົດລະບຽບ ກ່ຽວກັບຂະແໜງນ້ຳປະປາ ພາຍໃນແຂວງຂອງຕົນ.
+ ຊີ້ນຳການຈັດຕັ້ງປະຕິບັດ ໂຄງການພັດທະນາລະບົບນ້ຳປະປາ ແລະນ້ຳເປື້ອນພາຍໃນແຂວງ ຂອງຕົນ.

+ ສົມທົບກັບອົງການນ້ຳປະປາ ຂໍອະນຸມັດພັດທະນາແຫຼ່ງນ້ຳ ໂດຍຜ່ານຄະນະກຳມະການປະສານງານລຸ່ມພະຍາ ກອນນ້ຳ ໂດຍອີງໃສ່ດຳລັດນາຍົກລັດຖະມົນຕີ ເລກທີ 09/ນຍ, ລົງວັນທີ 8 ກຸມພາ 1999, ວ່າດ້ວຍການຈັດຕັ້ງ ແລະພາລະບົດບາດຂອງຄະນະກຳມະການປະສານງານຊັບພະຍາ ກອນນ້ຳ.

+ ກະກຽມການຈັດຕັ້ງການຄຸ້ມຄອງລະບົບນ້ຳເປື້ອນ ແບບລວມສູນ ຄືກັນກັບລະບົບນ້ຳປະປາ ຫາກເຖິງເວລາ ທີ່ວ່າລະບົບນີ້ສາມາດເປັນໄປໄດ້ທາງດ້ານເສດຖະກິດ ແລະການເງິນ. ແຕ່ໃນ ເວລານີ້ ການຄຸ້ມຄອງລະບົບ ນ້ຳເປື້ອນ ແມ່ນຄວາມຮັບຜິດຊອບ ຂອງເຈົ້າຂອງເຮືອນເອງ.

+ ມີໜ້າທີ່ຈັດຫານ້ຳສະອາດໃນເຂດຊົນນະບົດ ແລະອະນາໄມສິ່ງແວດລ້ອມໃນຕົວເມືອງ ແລະ ເຂດຊົນນະບົດ ຢູ່ ພາຍໃນແຂວງຂອງຕົນ.

- ລັດວິສາຫະກິດນ້ຳປະປາ ມີໜ້າທີ່:

+ ຈັດຕັ້ງປະຕິບັດ ຄຸ້ມຄອງ ລະບົບນ້ຳປະປາ ແລະນ້ຳເປື້ອນ, ການພັດທະນານ້ຳດື່ມ ໃນຕົວເມືອງ ແລະຊົນນະບົດ ຢູ່ພາຍໃນແຂວງຂອງຕົນ ບົນຫຼັກການການຄ້າ ແລະສ້າງແຜນການດຳເນີນງານ ຜະລິດທຸລະກິດ 3 ປີ ໂດຍມີ ການປັບປຸງທຸກໆປີ.

+ ຮັບປະກັນໃຫ້ການຄຸ້ມຄອງນ້ຳເປື້ອນ ຢູ່ພາຍໃນແຂວງຂອງຕົນ ສອດຄ່ອງກັບລະບຽບການ ວ່າດ້ວຍສຸຂາພິ ບານ.

ລັດວິສາຫະກິດນ້ຳປະປາໃດທີ່ບໍ່ສາມາດບັນລຸເປົ້າໝາຍທາງດ້ານການຄ້າໄດ້ໃນໄລຍະສັ້ນເຖິງໄລຍະກາງອາດ ຈະໄດ້ຮັບການສະໜັບສະໜູນທາງດ້ານການເງິນ ແລະດ້ານວິຊາການຈາກລັດ ກໍຄືອຳນາດການປົກຄອງແຂວງ ກຳແພງນະຄອນ ແລະເຂດພິເສດ.

- ປະຊາຊົນ ທົ່ວປະເທດ ມີໜ້າທີ່ປົກປັກຮັກສາລະບົບນ້ຳປະປາ, ລະບົບນ້ຳສະອາດ, ລະບົບນ້ຳເປື້ອນ ແລະ ອະນາ ໄມສິ່ງແວດລ້ອມຢູ່ໃນເຂດທີ່ຕົນອາໃສຢູ່.

## ມາດຕາ 3. ການສ້າງຕັ້ງຄະນະຊີ້ນຳຂະແໜງນ້ຳປະປາ

3.1 ນາຍົກລັດຖະມົນຕີ ຈະຮັບຮອງເອົາການສ້າງຕັ້ງ ຄະນະຊີ້ນຳຂະແໜງນ້ຳປະປາ ເພື່ອຮັບຜິດຊອບຊີ້ນຳ, ໃຫ້ທິດທາງ ແລະ ຕັດສິນບັນຫາທີ່ສຳຄັນ ເຊັ່ນ: ການຕັດສິນ, ການຄຸ້ມຄອງ, ການຮ້ອງທຸກ ແລະ ຄຳຕຳນິ ຕິຊົມ ຂອງຜູ້ບໍລິໂພກ ແລະຂອງລັດວິສາຫະກິດນ້ຳປະປາ.

3.2 ຄະນະຊີ້ນຳຂະແໜງນ້ຳປະປາ ມີກອງເລຂາ ຕັ້ງຢູ່ກະຊວງ ຄຂປກ ແລະປະກອບດ້ວຍ 9 ທ່ານ ດັ່ງຕໍ່ລົງໄປນີ້:

| | |
|---|---|
| 1. ລັດຖະມົນຕີຊ່ວຍວ່າການ ກະຊວງ ຄຂປກ | ເປັນປະທານ |
| 2. ຫົວໜ້າກົມເຄຫາຜັງເມືອງ | ເປັນຮອງປະທານ |
| 3. ກຳມະການທາງດ້ານກົດໝາຍ, ມາຈາກກະຊວງຍຸຕິທຳ | ເປັນຄະນະ |
| 4. ກຳມະການທາງດ້ານການເງິນ, ມາຈາກ ກະຊວງການເງິນ | ເປັນຄະນະ |
| 5. ກຳມະການທາງດ້ານສິ່ງແວດລ້ອມ, ມາຈາກອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ | ເປັນຄະນະ |
| 6. ຜູ້ຕາງໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | ເປັນຄະນະ |
| 7. ຕົວແທນຜູ້ບໍລິໂພກປະເພດອຸດສາຫະກຳ ມາຈາກພາກສ່ວນເອກະຊົນ | ເປັນຄະນະ |
| 8. ຕົວແທນຜູ້ບໍລິໂພກ ປະເພດທີ່ພັກພາອາໃສ ມາຈາກພາກສ່ວນເອກະຊົນ | ເປັນຄະນະ |
| 9. ຫົວໜ້າອົງການນ້ຳປະປາ | ເປັນຄະນະ |

3.3 ກອງເລຂາຂອງຄະນະຊີ້ນຳຂະແໜງນ້ຳປະປາ ປະກອບດ້ວຍ ຫົວໜ້າອົງການນ້ຳປະປາ ເປັນຫົວໜ້າ ທັງເປັນ ຜູ້ປະຈຳການ ແລະພະນັກງານປະຈຳການຊ່ວຍວຽກຈຳນວນໜຶ່ງ. ມີໜ້າທີ່ປະສານງານ ແລະ ສະຫຼຸບລາຍງານ ແຜນດຳເນີນງານຂອງຂະແໜງນ້ຳປະປາ.

3.4 ພະນັກງານລັດແຕ່ລະທ່ານ ທີ່ຢູ່ໃນຄະນະຊີ້ນຳຂະແໜງນ້ຳປະປາ ແມ່ນຖືກແຕ່ງຕັ້ງໂດຍ ລັດຖະມົນຕີ ຂອງກະຊວງທີ່ກ່ຽວຂ້ອງ . ແລະ ຮັບຮອງເອົາໂດຍນາຍົກລັດຖະມົນຕີ ເພື່ອໃຫ້ມາຊ່ວຍວຽກດັ່ງກ່າວແບບບໍ່ປະຈຳການ ໃນກຳນົດ 3 ປີ ແລະ ພາຍຫຼັງຈາກປະຕິບັດໜ້າທີ່ດັ່ງກ່າວຄົບກຳນົດ 3 ປີ ແລ້ວ ກໍ່ສາມາດ ໄດ້ຮັບການແຕ່ງຕັ້ງຄືນໃໝ່ໄດ້.

3.5 ຕົວແທນ 2 ທ່ານ ທີ່ມາຈາກພາກສ່ວນເອກະຊົນນັ້ນ ແມ່ນໃຫ້ຄັດເລືອກເອົາໂດຍອີງໃສ່ການປະຈຳການຂອງຜູ້ກ່ຽວຢູ່ໃນຊຸມຊົນໃດໜຶ່ງ.

## ມາດຕາ 4. ການຈັດຫາທຶນ ແລະການເກັບກູ້ທຶນຄືນ

4.1 ລັດວິສາຫະກິດນ້ຳປະປາ ຮັບຜິດຊອບຕໍ່ຕົ້ນທຶນທັງໝົດ ສຳລັບການຄຸ້ມຄອງນ້ຳປະປາ ແລະນ້ຳເປື້ອນຊື່ງ ອາດຈະຂໍອະນຸຍາດຈາກລັດຖະບານນຳໃຊ້ເງິນສຳລັບຊຳລະໜີ້ ແລະລາຍໄດ້ ທີ່ຫັກເອົາໄວ້ມາເປັນ ແຫຼ່ງທຶນ.

4.2 ກໍລະນີທີ່ລັດວິສາຫະກິດນ້ຳປະປາ ໃດໜຶ່ງບໍ່ສາມາດສ້າງລາຍຮັບໄດ້ພຽງພໍ ເພື່ອຈັດຫາທຶນ ໃນຮູບການຂ້າງເທິງນີ້ ເນື່ອງມາຈາກກຳລັງຊື້ຂອງຜູ້ບໍລິໂພກຕ່ຳ, ອຳນາດການປົກຄອງແຂວງທີ່ກ່ຽວຂ້ອງ ແລະລັດຖະບານ ອາດຈະພິຈາລະນາສະໜັບສະໜູນການຈັດຫາທຶນໃຫ້, ອົງການນ້ຳປະປາ ແລະ ພະແນກ ຄຂປກປະຈຳແຂວງ, ກຳແພງນະຄອນ ແລະເຂດພິເສດ ຈະໃຫ້ການຊ່ວຍເຫຼືອທາງດ້ານວິຊາການ.

4.3 ກໍລະນີທຶນຊ່ວຍເຫຼືອຈາກຕ່າງປະເທດ ຫຼືສາກົນ, ກະຊວງ ຄຂປກ ເປັນຜູ້ອຳນວຍຄວາມສະດວກ ແລະປະສານງານ ໃນການວາງລະດັບ ແລະທິດທາງໃນການນຳໃຊ້ທຶນເຂົ້າໃນການພັດທະນາ ແລະກະຊວງ ການເງິນເປັນຜູ້ຮັບຜິດຊອບຈັດການທາງດ້ານການເງິນ.

ອາດຈະໃຫ້ ລັດວິສາຫະກິດນ້ຳປະປາແຂວງ ກຳແພງນະຄອນ ແລະເຂດພິເສດ ກູ້ຢືມໝົດ, ຫຼືວ່າໃຫ້ກູ້ຢືມສ່ວນໜຶ່ງ ແລະຊ່ວຍເຫຼືອລ້າສ່ວນໜຶ່ງ, ຫຼືວ່າໃຫ້ການຊ່ວຍເຫຼືອລ້າທັງໝົດ ຕາມແຕ່ກໍລະນີ.

ການຈັດການທາງດ້ານການເງິນ ລະຫວ່າງ ກະຊວງ ການເງິນ ແລະລັດວິສາຫະກິດນ້ຳປະປາແຂວງທີ່ກ່ຽວຂ້ອງ ແມ່ນໃຫ້ສອດຄ່ອງກັບ ຂໍ້ຕົກລົງລະຫວ່າງ ຜູ້ໃຫ້ທຶນ ແລະລັດຖະບານ ແລະ ສອດຄ່ອງກັບລະດັບກຳລັງຊື້ ຂອງຜູ້ບໍລິໂພກ. ບໍ່ວ່າກໍລະນີໃດ ລັດຖະບານ ຈະເອົາອັດຕາດອກເບ້ຍຂອງທຶນທີ່ໃຫ້ ກູ້ຢືມຕໍ່ບໍ່ຕ່ຳກວ່າ 6-7 ເປີເຊັນ.

ລັດວິສາຫະກິດນ້ຳປະປາ ຮັບຜິດຊອບໃຊ້ໜີ້ທັງໝົດ ຂອງທຶນທີ່ກູ້ຢືມມາ ເວັ້ນເສຍແຕ່ວ່າຈະໄດ້ຮັບການອະນຸໂລມພິເສດ ຍ້ອນວ່າບໍ່ສາມາດວາງລາຄານ້ຳໄດ້ຕາມຄວາມເໝາະສົມທາງດ້ານທຸລະກິດ ເນື່ອງມາຈາກວ່າກຳລັງຊື້ ແລະຄວາມເພີ່ງພໍໃຈທີ່ຈະຈ່າຍ ຂອງຜູ້ບໍລິໂພກແມ່ນຍັງຕ່ຳ.

ສຳລັບບ້ວງທຶນກູ້ຢືມຈາກພາຍນອກ, ລັດຖະບານ ມີຄວາມຮັບຜິດຊອບຕໍ່ຄວາມສ່ຽງຕໍ່ອັດຕາແລກປ່ຽນ ເງິນຕາ. ລັດວິສາຫະກິດນ້ຳປະປາ ຕ້ອງໃຊ້ໜີ້ຄືນ ໃນອັດຕາແລກປ່ຽນຂອງມື້ເຊັນຂໍ້ຕົກລົງເງິນກູ້ຢືມຕໍ່.

ລັດວິສາຫະກິດນ້ຳປະປາ ຮັບຜິດຊອບວາງລາຄານ້ຳ ໃຫ້ສາມາດສ້າງລາຍຮັບ ທີ່ຮັບປະກັນການເກັບກູ້ທຶນຄືນໄດ້ ສຳລັບລະບົບນ້ຳປະປາ ແລະນ້ຳເປື້ອນ. ແຕ່ວ່າລາຄາດັ່ງກ່າວ ຈະບໍ່ສູງເກີນກວ່າກຳລັງຊື້ ແລະຄວາມເພີ່ງພໍໃຈທີ່ຈະຈ່າຍຂອງຜູ້ບໍລິໂພກ.ຢ່າງໃດກໍ່ດີ,ລາຄານ້ຳທີ່ລັດວິສາຫະກິດນ້ຳປະປາວາງອອກຄວນໃຫ້ຕົນສາມາດສ້າງລາຍຮັບໄດ້ພຽງພໍສຳລັບການໃຊ້ຈ່າຍໃນການດຳເນີນງານ ແລະ ບົວລະບັດ ຮັກສາ. ຫາກວ່າຢູ່ແຂວງ, ກຳແພງນະຄອນ ແລະເຂດພິເສດ ມີຄວາມເປັນໄປໄດ້ ກໍ່ໃຫ້ວາງ ລາຄານ້ຳອອກແນໃສ່ໃຫ້ສາມາດສ້າງລາຍຮັບສ່ວນເກີນໄດ້ ເພື່ອຈ່າຍຄ່າຫຼຸຍຫ້ຽນ ຫຼືຊຳລະໜີ້ສິນ.

4.4 ລັດວິສາຫະກິດນ້ຳປະປາ ແຕ່ລະແຂວງ, ກຳແພງນະຄອນ ແລະເຂດພິເສດ ມີໜ້າທີ່ວາງລາຄານ້ຳປະປາ ແລະ ເຮັດເປັນລາຄາດຽວກັນໝົດທຸກໆເມືອງຢູ່ພາຍໃນແຂວງຂອງຕົນ ເພື່ອໃຫ້ສາມາດດຸ່ນດ່ຽງຊ່ວຍເຫຼືອກັນໄດ້ ລະຫວ່າງ ຕົວເມືອງທີ່ມີລາຍຮັບແຕກຕ່າງກັນ.

4.5 ລັດວິສາຫະກິດນ້ຳປະປາ ນຳໃຊ້ໂຄງສ້າງລາຄານ້ຳ ທີ່ມີການແບ່ງປະເພດຜູ້ຊົມໃຊ້, ແຕ່ລະປະເພດຜູ້ຊົມໃຊ້ ຈັດອອກເປັນກຸ່ມປະລິມານນ້ຳປະປາທີ່ຊົມໃຊ້ແບບເພີ່ມທະວີ ໂດຍໃຫ້ກຳນົດເອົາກຸ່ມປະລິມານການໃຊ້ນ້ຳແບບປະຢັດໃນຄົວເຮືອນໜຶ່ງ ເປັນກຸ່ມປະລິມານທີ່ຕໍ່າກວ່າໝູ່.

4.6 ການວາງລາຄານ້ຳ ສຳລັບປະເພດບໍລິໂພກພາຍໃນຄົວເຮືອນທີ່ງມີປະລິມານນ້ອຍກວ່າໝູ່ ແລະມີລາຍຮັບຕໍ່າ ສາມາດຈ່າຍຄ່ານ້ຳໄດ້ຢູ່ໃນຂອບເຂດບໍ່ເກີນ 3 ເປີເຊັນຂອງລາຍຮັບຂອງເຂົາເຈົ້າ.

4.7 ການວາງລາຄານ້ຳສຳລັບປະເພດບໍລິໂພກໃນຄົວເຮືອນ ຊຶ່ງມີປະລິມານຫຼາຍກວ່າໝູ່ ແລະມີລາຍຮັບສູງໂດຍ ສະເລ່ຍບໍ່ໃຫ້ເກີນ 5 ເປີເຊັນຂອງລາຍຮັບຂອງເຂົາເຈົ້າ ເພື່ອຊ່ວຍໜູນຊຶ່ງກັນ ແລະກັນ ລະຫວ່າງຜູ້ທີ່ມີ ລາຍຮັບແຕກຕ່າງກັນ ທັງເປັນການປົກປັກຮັກສາຊັບພະຍາກອນນ້ຳ ແລະເປັນການຊຸກຍູ້ລາຍຮັບຂອງ ລັດວິສາຫະກິດນ້ຳປະປາ.

4.8 ລັດວິສາຫະກິດນ້ຳປະປາ ຮັບຜິດຊອບວາງ ຫຼືປັບປຸງລາຄານ້ຳ ອີງຕາມການເໜັງຕີງຂອງຄ່າແຮງງານ, ພະລັງງານ, ນ້ຳມັນເຊື້ອໄຟ, ສານເຄມີ ແລະວັດຖຸອຸປະກອນ, ແຕ່ໃຫ້ສອດຄ່ອງກັບໂຄງປະກອບລາຄານ້ຳ ທີ່ກົມການນ້ຳປະປາໄດ້ກຳນົດອອກແລ້ວນຳສະເໜີຂໍອະນຸມັດຈາກ ທ່ານເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ ແລະ ຫົວໜ້າເຂດພິເສດ.

ມາດຕາ 5. ການດຳເນີນງານນ້ຳປະປາ

5.1 ລັດວິສາຫະກິດນ້ຳປະປາ ຮັບຜິດຊອບດຳເນີນງານ ແລະຄຸ້ມຄອງນ້ຳປະປາ ທັງໝົດພາຍໃນແຂວງຂອງຕົນ. ໂດຍນຳໃຊ້ຫຼັກການການຄ້າ ແລະໃຫ້ສອດຄ່ອງກັບແຜນການດຳເນີນທຸລະກິດ 3 ປີ ຊຶ່ງຈະຕ້ອງໄດ້ປັບປຸງທຸກໆປີ ແລະລາຍງານໃຫ້ ກົມການນ້ຳປະປາ ຊາບ, ການຜະລິດ ແລະການບໍລິໂພກນ້ຳທັງໝົດ ຕ້ອງຜ່ານການວັດແທກຢ່າງຊັດເຈນ.

5.2 ລັດວິສາຫະກິດນ້ຳປະປາ ຮັບຜິດຊອບຄຸ້ມຄອງອັດຕານ້ຳສູນເສຍຕາມບົດແນະນຳຂອງ ກົມການນ້ຳປະປາ ແນໃສ່ໃຫ້ສາມາດຮັກສາລະດັບປະລິມານນ້ຳສູນເສຍບໍ່ໃຫ້ສູງເກີນກວ່າ 30 ເປີເຊັນ.

5.3 ລັດວິສາຫະກິດນ້ຳປະປາ ຕ້ອງປະຕິບັດ, ຮັກສາລະບົບການບັນຊີທາງດ້ານການຄ້າ, ແລະສ້າງບົດບັນຊີທາງດ້ານການເງິນປະຈຳປີ ແລ້ວລາຍງານໃຫ້ກົມການນ້ຳປະປາຊາບ.

5.4 ໜີ້ຄ້າງຮັບແຕ່ລະລາຍ ຂອງລັດວິສາຫະກິດນ້ຳປະປາ ຕ້ອງບໍ່ໃຫ້ຄ້າງເກີນ 3 ເດືອນ ພາຍຫຼັງທີ່ໄດ້ ອອກໃບເກັບເງິນໄປແລ້ວ, ລັດວິສາຫະກິດນ້ຳປະປາ ຕ້ອງນຳໃຊ້ມາດຕະການເດັດຂາດ ສຳລັບລູກຄ້າ ທີ່ບໍ່ຈ່າຍເງິນຄ່ານ້ຳເກີນ 3 ເດືອນ. ທຸກໆລັດວິສາຫະກິດນ້ຳປະປາ ຕ້ອງວາງເປົ້າໝາຍໄວ້ວ່າຕົນຈະ ຕ້ອງເກັບເງິນຄ່ານ້ຳໃຫ້ໄດ້ບໍ່ຕໍ່າກວ່າ 90 ເປີເຊັນ ຂອງຈຳນວນໃບເກັບເງິນທີ່ສົ່ງອອກໄປ.

5.5 ລັດວິສາຫະກິດນ້ຳປະປາຮັບຜິດຊອບດຳເນີນງານ ແລະ ຄຸ້ມຄອງນ້ຳປະປາຂອງຕົນໃຫ້ສອດຄ່ອງກັບຕົວຊີ້ບອກ ຂອງການປະຕິບັດງານ: ປະສິດທິພາບໃນການໃຊ້ນ້ຳ, ຄຸນນະພາບນ້ຳ, ຄວາມໄວ້ວາງໃຈໃນການ ສະໜອງນ້ຳ, ການນຳໃຊ້ພະນັກງານ ແລະການຕຳນິຕິຊົມຂອງຜູ້ບໍລິໂພກ.

5.6 ລັດວິສາຫະກິດນ້ຳປະປາ ຮັບຜິດຊອບຈ່າຍຄ່າຊົດເຊີຍ ຕາມຂໍ້ກຳນົດ, ກົດລະບຽບ ແລະ ກົດໝາຍທີ່ລັດ ໄດ້ວາງອອກ. ເງິນເລກດັ່ງກ່າວ ຕ້ອງໄດ້ບັນທຶກໄວ້ໃນບັນຊີສຳລັບການຈ່າຍຄ່າຊົດເຊີຍເຊິ່ງຖືວ່າເປັນ ລາຍການ ຈ່າຍຢູ່ໃນງົບປະມານຂອງລັດວິສາຫະກິດນ້ຳປະປາ ແລະ ຖືວ່າເປັນລາຍການທີ່ບໍ່ໄດ້ເສຍຄ່າພາສີ.

## ມາດຕາ 6. ການສ້າງຈິດສຳນຶກ ແລະ ການປະກອບສ່ວນຂອງປະຊາຊົນ

6.1 ປະຊາຊົນ ມີສ່ວນຮ່ວມໃນການພັດທະນາ ນ້ຳປະປາ ແລະນ້ຳເປື້ອນ, ຕັ້ງແຕ່ໄລຍະເລີ່ມຕົ້ນໂຄງການ ຕະຫຼອດ ເຖິງໄລຍະການດຳເນີນງານ ແລະບົວລະບັດຮັກສາ.

6.2 ໃນຊ່ວງໄລຍະກະກຽມໂຄງການ ຊຸມຊົນທັງໝົດທີ່ຈະໄດ້ຮັບຜົນປະໂຫຍດຈາກໂຄງການ ຄວນໄດ້ຮັບ ການໂຄສະນາ ກ່ຽວກັບຄວາມຈຳເປັນ, ຄວາມຕ້ອງການ, ກຳລັງຊື້ ແລະຄວາມເຕັມໃຈທີ່ຈະຈ່າຍ ຄ່າສິ່ງທີ່ເຂົາ ໄດ້ຮັບການບໍລິການ ເພື່ອນຳໃຊ້ເປັນຂໍ້ມູນເຂົ້າໃນການອອກແບບໂຄງການ.

6.3 ພາຍຫຼັງສຳເລັດການກໍ່ສ້າງໂຄງການ ແລະໄດ້ສືບການດຳເນີນງານທີ່ເໝາະສົມແລ້ວ, ລັດວິສາຫະກິດ ນ້ຳປະປາ ຄວນສຳຫຼວດທາບທາມເບິ່ງຄວາມເພິ່ງພໍໃຈຂອງຜູ້ບໍລິໂພກຢ່າງສະໝ່ຳສະເໝີ ເປັນການ ກຳນົດການ ຂອງເຂົາ ເພື່ອນຳໃຊ້ເຂົ້າໃນການປັບປຸງການດຳເນີນງານ ແລະບົວລະບັດຮັກສານ້ຳປະປາ ແລະນ້ຳເປື້ອນ ພາຍໃນແຂວງ ຂອງເຂົາ ໃຫ້ມີປະສິດທິຜົນ.

## ມາດຕາ 7. ການພັດທະນາບຸກຄະລາກອນ

7.1 ລັດວິສາຫະກິດນ້ຳປະປາ ກຳແພງນະຄອນວຽງຈັນ ຈະຕ້ອງພັດທະນາຄວາມສາມາດ ແລະໃຫ້ການຝຶກ ອົບຮົມ, ຈັດກອງປະຊຸມວິຊາການ, ເຜີຍແຜ່ຂໍ້ມູນຂ່າວສານ ແລະແຈກຢາຍຄູ່ມື ກ່ຽວກັບການຝຶກອົບຮົມ ແລະການປັບປຸງຄວາມສາມາດທັງໝົດທີ່ມີ ພ້ອມທັງໃຫ້ການຊ່ວຍເຫຼືອທາງດ້ານວິຊາການແກ່ ບັນດາ ລັດວິສາຫະກິດນ້ຳປະປາແຂວງ, ກຳແພງນະຄອນ ແລະ ເຂດພິເສດ ກ່ຽວກັບການຈັດຕັ້ງ ແລະ ຄຸ້ມຄອງ ໂຄງການ.

7.2 ລັດວິສາຫະກິດນ້ຳປະປາແຂວງ ແລະ ເຂດພິເສດ ຄວນມີນະໂຍບາຍພັດທະນາຄວາມສາມາດໃຫ້ພະນັກງານ ແລະ ຮັບຜິດຊອບຈ່າຍຄ່າຝຶກອົບຮົມ ໃຫ້ແກ່ລັດວິສາຫະກິດນ້ຳປະປາ ກຳແພງນະຄອນ ແລະ ຈ່າຍໃຫ້ແກ່ ພະນັກງານທີ່ເປັນຜູ້ເຂົ້າຮ່ວມຝຶກອົບຮົມ. ລັດວິສາຫະກິດນ້ຳປະປາແຂວງ ແລະເຂດພິເສດ ຄວນວາງງົບປະ ມານໄວ້ໃຫ້ເໝາະສົມສຳລັບວຽກງານຝຶກອົບຮົມ ແລະສ້າງບັນຊີ ຢືນຕ່າງຫາກ, ລາຍຈ່າຍທັງໝົດ ກ່ຽວກັບ ວຽກງານຝຶກອົບຮົມ ໃຫ້ຖືວ່າເປັນລາຍຈ່າຍຢູ່ໃນງົບປະມານຂອງເຂົາ ແລະ ເປັນລາຍການທີ່ ຍົກເວັ້ນພາສີ.

## ມາດຕາ 8. ການພັດທະນາຂະແໜງນ້ຳປະປາ

8.1 ຈຸດໝາຍຂອງລັດຖະບານ ແມ່ນໃຫ້ 80 ເປີເຊັນຂອງປະຊາກອນທີ່ອາໄສຢູ່ໃນຕົວເມືອງ ໄດ້ຮັບການແຈກ ສະໜອງນ້ຳປະປາ ຕະຫຼອດ 24 ຊົ່ວໂມງ ພາຍໃນປີ 2000. ເພື່ອບັນລຸຈຸດໝາຍດັ່ງກ່າວ, ລັດຖະບານ ໄດ້ສ້າງ ແຜນການລົງທຶນຂອງຂະແໜງການ ຊຶ່ງໄດ້ໃຫ້ຄັດມາ ໃນໃບຊ້ອນທ້າຍທີ 1 ຂອງຂໍ້ບັນຍັດສະບັບນີ້, ແລະ ຖືວ່າເປັນພາກສ່ວນໜຶ່ງຂອງຂໍ້ບັນຍັດສະບັບນີ້. ການສ້າງແຜນນີ້ມີຂຶ້ນມາ ແມ່ນເພື່ອເປັນບ່ອນອີງ ໃຫ້ແກ່ການ ລົງທຶນເຂົ້າໃນຂະແໜງ ນ້ຳປະປາ ຮອດປີ 2020 ແລະ ເພື່ອໃຫ້ທຸກພາກສ່ວນທົ່ວປະເທດໄດ້ຮັບຜົນປະ ໂຫຍດຈາກການພັດທະນານີ້ຢ່າງສະເໝີພາບກັນ.

8.2 ຂະແໜງນ້ຳປະປາ ມີແຜນການລົງທຶນດັ່ງຕໍ່ໄປນີ້:

+ ສືບຕໍ່ຂະຫຍາຍນ້ຳປະປາ ຢູ່ໃນກຳແພງນະຄອນ ແລະໃນບັນດາເທດສະບານຂອງແຂວງ ໃຫ້ສຳເລັດພາຍໃນປີ 2012.

+ ພັດທະນາ ນ້ຳປະປາ ໃນບັນດາຕົວເມືອງນ້ອຍ ໃຫ້ສຳເລັດພາຍໃນປີ 2020.

**ມາດຕາ 9. ການມີສ່ວນຮ່ວມຂອງພາກສ່ວນເອກະຊົນ**

9.1 ລັດຖະບານ ຮຽກຮ້ອງໃຫ້ມີລະບຽບການ ວ່າດ້ວຍການມີສ່ວນຮ່ວມຂອງພາກສ່ວນເອກະຊົນເຂົ້າໃນ ການພັດທະນານ້ຳປະປາ ຢ່າງຈະແຈ້ງ ແລະ ເໝາະສົມ ເພື່ອຮັບປະກັນໃຫ້ມີການແຂ່ງຂັນກັນແບບ ເປີດເຜີຍ ແລະ ມີປະສິດທິພາບ.

9.2 ອົງການນ້ຳປະປາ ສົມທົບກັບກົມເຄຫາຜັງເມືອງ ສ້າງກົດລະບຽບ ກ່ຽວກັບການສົ່ງເສີມພາກສ່ວນເອກະຊົນ ໃຫ້ເຂົ້າຮ່ວມໃນການພັດທະນານ້ຳປະປາ ແລະນ້ຳເປື້ອນ ເພື່ອນຳສະເໜີ ລັດຖະບານ ຮັບຮອງເອົາ.

**ມາດຕາ 10.** ມອບໃຫ້ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ກະຊວງ ການເງິນ, ຄະນະກຳມະການແຜນການແຫ່ງລັດ ແລະ ບັນດາຂະແໜງການກ່ຽວຂ້ອງ, ບັນດາແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

**ມາດຕາ 11.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 30-9-1999.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ

ຊີສະຫວາດ ແກ້ວບຸນພັນ